**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ຫ້ອງການ

ເລກທີ 3038 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 01/12/2025

# ແຈ້ງການ

**ເຖິງ:** ທ່ານຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ ແລະ ນະຄອນຫຼວງວຽງຈັນ

**ເລື່ອງ:** ຊ່ວຍຊຸກຍູ້ໃຫ້ຫົວໜ່ວຍການຜະລິດ, ທຸລະກິດ ແລະ ການບໍລິການ, ໂຄງການລົງທຶນພາຍໃນ-ຕ່າງປະເທດ ໃນທຸກຂົງເຂດເສດຖະກິດ ແລະ ສັງຄົມ ທີ່ຕ້ອງການນຳໃຊ້ແຮງງານຕ່າງປະເທດ ໃນທົ່ວປະເທດ ສ້າງຈຸດປະສານງານຜູ້ຮັບຜິດຊອບຝ່າຍບຸກຄະລາກອນ (HR) ແລະ ສັງລວມແຜນຄວາມຕ້ອງການນຳໃຊ້ແຮງງານຕ່າງປະເທດ ຂອງຫົວໜ່ວຍແຮງງານ ປີ 2026

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 0888/ຣສສ, ລົງວັນທີ 18 ມີນາ 2022;
- ອີງຕາມ ກົດໝາຍວ່າດ້ວຍການຈັດຫາງານ ໃນມາດຕາ 10 ການຮັບສະໝັກງານ ສະບັບເລກທີ 37/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການອະນຸຍາດໃຫ້ຜູ້ອອກແຮງງານຕ່າງປະເທດ ເຂົ້າມາເຮັດວຽກຢູ່ ສປປ ລາວ ສະບັບເລກທີ 3667/ຣສສ, ລົງວັນທີ 27 ກັນຍາ 2023.

ຫ້ອງການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຂໍຖືເປັນກຽດແຈ້ງມາຍັງ ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງວຽງຈັນ ຊ່ວຍຊຸກຍູ້ໃຫ້ຫົວໜ່ວຍການຜະລິດ, ທຸລະກິດ ແລະ ການບໍລິການ, ໂຄງການລົງທຶນພາຍໃນ-ຕ່າງປະເທດ ໃນທຸກຂົງເຂດເສດຖະກິດ ແລະ ສັງຄົມ ທີ່ຕ້ອງການນຳໃຊ້ແຮງງານຕ່າງປະເທດ ໃນທົ່ວປະເທດ ສ້າງຈຸດປະສານງານຜູ້ຮັບຜິດຊອບ ຝ່າຍບຸກຄະລາກອນ (HR) ພ້ອມທັງສັງລວມ ແຜນຄວາມຕ້ອງການນຳໃຊ້ແຮງງານຕ່າງປະເທດ ຂອງຫົວໜ່ວຍແຮງງານ ຕົ້ນປີ 2026 ແລ້ວ ກະລຸນາ ສົ່ງຂໍ້ມູນໃຫ້ກົມການຈັດຫາງານ (ຕາມສິ່ງທີ່ໄດ້ຄັດຕິດ) ຊ້າສຸດບໍ່ໃຫ້ກາຍວັນທີ **31 ທັນວາ 2025** ກ່ອນຍື່ນຄຳຮ້ອງ ສະເໜີແຜນຄວາມຕ້ອງການນຳໃຊ້ແຮງງານຕ່າງປະເທດ ປີ 2026 ຂອງຫົວໜ່ວຍແຮງງານດັ່ງກ່າວ. (ລາຍລະອຽດແມ່ນມີເອກະສານຄັດຕິດມາພ້ອມນີ້)

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຂໍຄວາມຮ່ວມມືໃນຊຸກຍູ້ວຽກງານດັ່ງກ່າວໃຫ້ທັນຕາມເວລາດ້ວຍ.

**ຫົວໜ້າຫ້ອງການ**

ຫ້ອງການ

**ບຸນຍອດ ຈັນທະວອນ**

<u>ເອກະສານຄັດຕິດ:</u>

- ຕາຕະລາງສັງລວມແຜນຄວາມຕ້ອງການນຳໃຊ້ແຮງງານຕ່າງປະເທດ ປີ 2026
- ແບບຟອມເກັບກຳຂໍ້ມູນຜູ້ຮັບຜິດຊອບຝ່າຍບຸກຄະລາກອນ (HR)

<u>ເບີໂທຕິດຕໍ່ ແລະ ປະສານງານ:</u>

ເບີໂທ ແລະ ວັອບແອັບ: +85620 58547724